JDB ເປີດກອງປະຊຸມສະຫຼຸບຜົນດຳເນີນທຸລະກິດ 9 ເດືອນຜ່ານມາ ແລະ ແຜນການດຳເນີນທຸລະກິດ 3 ເດືອນທ້າຍປີ 2025



ໃນຕອນບ່າຍວັນທີ **13** ຕຸລາ **2025**, ທີ່ທະນາຄານຮ່ວມພັດທະນາ ມະຫາຊົນ Joint Development Bank Public ໄດ້ເປີດກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດ 9 ເດືອນຜ່ານມາ ແລະ ແຜນການດຳເນີນທຸລະກິດ 3 ເດືອນທ້າຍປີ 2025 ທີ່ສຳນັກງານໃຫຍ່ ຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ, ພາຍໃຕ້ການເປັນປະທານກອງປະຊຸມໂດຍ **ທ່ານ ເອກະພັນ ພະພິທັກ** ປະທານຜູ້ຖືຮຸ້ນ, ມີ ທ່ານ ວິໄລ ສີພະພອນ ປະທານສະພາບໍລິຫານ, ທ່ານ ສາຄອນ ຍໍພັນໄຊ ຜູ້ອຳນວຍການໃຫຍ່, ພ້ອມດ້ວຍຄະນະຜູ້ບໍລິຫານ, ຄະນະພະແນກ ແລະ ໜ່ວຍບໍລິການ ທົ່ວນະຄອນຫຼວງວຽງຈັນ, ນອກຈາກນີ້ ຍັງມີບັນດາໜ່ວຍບໍລິການຕ່າງແຂວງທົ່ວປະເທດ ໄດ້ຮ່ວມກອງປະຊຸມຜ່ານລະບົບ Video Conference.



ເປັນກຽດກ່າວເປີດກອງປະຊຸມຢ່າງເປັນທາງການໂດຍ ທ່ານ ສາຄອນ ຍໍພັນໄຊ ຜູ້ອຳນວຍການ, ຕະຫຼອດການດຳເນີນກອງປະຊຸມ ດັ່ງກ່າວ ໄດ້ມີການຮັບຟັງການລາຍງານເຖິງຜົນສຳເລັດວຽກງານຫຼາຍໆດ້ານໃນ 9 ເດືອນ ທີ່ຜ່ານມາ ເຊັ່ນ: ດ້ານແຫ່ລ່ງທຶນ ແລະການນຳໃຊ້ທຶນ ແລະ ຍອດຊັບສິນທັງໝົດເພີ່ມຂຶ້ນ **19.40** % ຈາກປີ 2024;ຈຳນວນເງິນຝາກ ທຽບໃສ່ປີ 2024 ເພີ່ມຂຶ້ນ: 18.30 % ;

ການສະໜອງສິນເຊື່ອທຽບໃສ່ປີ2024 ເພີ່ມຂຶ້ນ: **11.67 %**; ຜົນການດຳເນີນທຸລະກິດ 9 ເດືອນຕົ້ນປີ2025 ທຽບໃສ່ປີ 2024 ເທົ່າກັບ 80.32 % ເຖິງເສດຖະກິດພາຍໃນປະເທດເຮົາເພິ່ງພາການນຳເຂົ້າເປັນສ່ວນໃຫຍ່, ເສດຖະກິດໂລກໄດ້ຮັບຜົນກະທົບ ຈາກໄພສົງຄາມ , ຂໍ້ຄັດແຍ້ງທາງການຄ້າ ແລະ ອື່ນໆ ເຖິງຢ່າງໃດກໍຕາມ ທ່ານໄດ້ໃຫ້ກຳລັງໃຈ ພະນັກງານທຸກຄົນ ໃຫ້ມີຄວາມເອົາໃຈໃສ່ໃນວຽກງານການ ບໍລິການລູກຄ້າ ໃຫ້ມີຄວາມປະທັບໃຈ.

ໃນກອງປະຊຸມຄັ້ງນີ້ ໄດ້ປັບປຸງໂຄງຮ່າງການຈັດຕັ້ງຄືນໃໝ່ ເພື່ອໃຫ້ແທດເໝາະ ແລະ ສອດຄ່ອງກັບວຽກງານໃນປະຈຸບັນ, ປັບປຸງໂຄງຮ່າງການຈັດຕັ້ງ ຂອງສະພາບໍລິຫານ, ປັບປຸງໂຄງຮ່າງການຈັດຕັ້ງ ຄະນະອຳນວຍການ ແລະ ປັບປຸງໂຄງຮ່າງການຈັດຕັ້ງບາງພະແນກການ, ເພື່ອຂັບເຄື່ອນທຸລະກິດຂອງທະນາຄານຮ່ວມພັດທະນາມະຫາຊົນ ໃຫ້ກ້າວໜ້າຢ່າງບໍ່ຢຸດຢັ້ງ.



ໃນກອງປະຊຸມໄດ້ຮັບຟັງການໂອ້ລົມ ຂອງທ່ານ ວິໄລ ສີພະພອນ ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາມະຫາຊົນ ທ່ານ ໄດ້ຍ້ອງຍໍຊົມເຊີຍ ຄະນະຜູ້ບໍລິຫານ ແລະ ພະນັກງານທຸກຄົນ ທີ່ໄດ້ເອົາໃຈໃສ່ ປະກອບສ່ວນເຂົ້ນໃນການດຳເນີນທຸລະກິດ 9 ເດືອນທີ່ຜ່ານມາຖືວ່າປະສົບຜົນສຳເລັດຢ່າງໜ້າເພິ່ງພໍໃຈ, ແລະ ໄດ້ຮັບຟັງການໂອ້ລົມ ຂອງທ່ານ ເອກະພັນ ພະພິທັກ ປະທານຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາມະຫາຊົນ ທ່ານໄດ້ຍົກໃຫ້ເຫັນ ຄວາມກ້າວໜ້າ ຂອງນະມັດຕະກຳໃໝ່ຂອງໂລກ ທີ່ມີການພັດທະນາ ດ້ານ AI ທີ່ສາມາດເອົາມາປະຍຸກເຂົ້າໃນວຽກງານທະນາຄານ, ທ່ານໄດ້ເນັ້ນໃຫ້ພະນັກງານທຸກຄົນຈົ່ງຮຽນຮູ້ສິ່ງໃໝ່ໆ ຢູ່ສະເໝີ, ເພາະທະນາຄານ ຮ່ວມພັດທະນາມີການຂະຫຍາຍຕົວ ແລະ ມີຜົນກຳໄລຕະຫຼອດມາ, ແລະ ປີນີ້ກໍໄດ້ກາຍເປັນທະນາຄານຂອງມະຫາຊົນ . ທ່ານໄດ້ ຍ້ອງຍໍຊົມເຊີຍຕໍ່ຜົນງານໃນໄລຍະ 9 ເດືອນຕົ້ນປີ ແລະ 3 ເດືອນທ້າຍປີ ຕ້ອງສູ້ຊົນໃຫ້ບັນລຸ ເປົ້າໝາຍKPI ທີ່ວາງໄວ້.

ການເດີນທາງ 36 ປີສູ່ທະນາຄານມະຫາຊົນ: ການເປີດການຊື້-ຂາຍຮຸ້ນຢ່າງເປັນທາງການຄັ້ງນີ້ບໍ່ພຽງແຕ່ເນັ້ນເຖິງບົດບາດຂອງ JDB ໃນຖານະຕົວກາງທາງການເງິນເທົ່ານັ້ນ ແຕ່ຍັງສະແດງໃຫ້ເຫັນເຖິງການເດີນທາງອັນຍາວນານ ແລະ ຄວາມສາມາດໃນການປັບຕົວຂອງອົງ ກອນ ເຊິ່ງເປັນບົດຮຽນອັນສຳຄັນ ສຳລັບທຸກໆທຸລະກິດທີ່ຕ້ອງການເຕີບໂຕແບບຍືນຍົງ, 36 ປີຜ່ານມາ: ຄວາມຍືນຍົງໃນໂລກທຸລະກິດ ທີ່ປ່ຽນແປງ, ການເຕີບໂຕຂອງ JDB ນັບຕັ້ງແຕ່ການກໍ່ຕັ້ງໃນປີ 1989 ຈົນມາເຖິງການຫັນປ່ຽນມາເປັນ ທະນາຄານມະຫາຊົນ ໃນປີ 2025 ແມ່ນເລື່ອງລາວຂອງການປັບຕົວ ແລະ ການມີວິໄສທັດທີ່ກ້ວາງໄກ.



JDBໄດ້ຜ່ານການປ່ຽນແປງ ຈາກການເປັນທະນາຄານທີ່ຖືຮຸ້ນໂດຍນັກລົງທຶນໄທໃນປີ 2010 ມາສູ່ການຖືຮຸ້ນໂດຍນັກທຸລະກິດລາວ ໃນປີ 2012, ແລະ ປະຈຸບັນໄດ້ກ້າວໄປສູ່ ທະນາຄານມະຫາຊົນໃນປີ 2025. ນີ້ສະແດງໃຫ້ເຫັນວ່າ ທຸລະກິດທີ່ຍືນຍົງຄືທຸລະກິດທີ່ ສາມາດປັບປ່ຽນຮູບແບບ ແລະ ໂຄງສ້າງເພື່ອຕອບສະໜອງຕໍ່ສະພາບແວດລ້ອມ ແລະ ໂອກາດໃໝ່ໆ.

ທະນາຄານຮ່ວມພັດທະນາ **ເຕີບໃຫຍ່ໄປພ້ອມກັນ**